ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===0000===------

076

ບໍລິສັດ ອີທີແອລ ຈຳກັດ

ເລກທີ:................../ອທອ

ລົງວັນທີ: 01 JUN 2020

# ແຈ້ງການເຊີນເຂົ້າຮ່ວມປະມູນ

ບໍລິສັດ ອີທີແອລ ຈຳກັດ ມີຈຸດປະສົງ ປະມູນຈັດຊື້ ຫົວ Closure ຈຳນວນ 1.056 ຊຸດ, suspension wheel ຈຳນວນ 2.112 ອັນ, safety screw hook bolt 16x14'' ຈຳນວນ 1.584 ຊຸດ, Preformed dead ead 95 ຈຳນວນ 1.584 ແລະ ອຸປະກອນອື່ນໆ ຊຶ່ງເປັນຈຳນວນລວມທັງໝົດ 8 ລາຍການ. ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງ ບຸກຄົນ, ນິຕິບຸກຄົນ ທີ່ມີຄວາມສົນໃຈ ທັງພາຍໃນປະເທດ ແລະ ຕ່າງປະເທດ, ທີ່ຕ້ອງການສະໜອງອຸປະກອນດັ່ງກ່າວ ກະລຸນາຕິດຕໍ່ພົວພັນຊື້ເອກະສານປະມູນນຳຄະນະກຳມະການປະມູນ (ລາຄາ 300.000 ກີບ/ຊອງ) ໃນໂມງລັດຖະການ ໄດ້ທີ່ພະແນກ ຈັດຊື້ ຊັ້ນ 04 ຂອງຕຶກ 07 ຊັ້ນ ສຳນັກງານໃຫຍ່ ບໍລິສັດ ອີທີແອລ ຈຳກັດ ຖະໜົນ ສາຍລົມ, ບ້ານ ສາຍລົມ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ໂທລະສັບຕັ້ງໂຕະ: 021 260005.

- ເງື່ອນໄຂຂອງຜູ້ເຂົ້າຮ່ວມປະມູນຕ້ອງປະກອບເອກະສານໃຫ້ຄົບຖ້ວນ ຕາມບົດແນະນຳຜູ້ເຂົ້າຮ່ວມປະມູນ ຂອງບໍລິສັດ ອີທີແອລ ຈຳກັດ.
- ເລີ່ມຂາຍຊອງປະມູນແຕ່ວັນທີ: 03 JUN 2020 ຮອດວັນທີ: 17 JUN 2020 ໃນໂມງລັດຖະການ.
- ຍື່ນຊອງປະມູນທາງດ້ານເຕັກນິກ ແລະ ທາງດ້ານ ຊອງລາຄາ ໃນວັນທີ: 18 JUN 2020 ເວລາ 09:00 - 9:30 ໂມງ ທີ່ຫ້ອງປະຊຸມ ຊັ້ນ 4 ບໍລິສັດ ອີທີແອລ ຈຳກັດ. ຖ້າກາຍວັນເວລາດັ່ງກ່າວ ບໍລິສັດ ອີທີແອລ ຈຳກັດ ຈະບໍ່ຮັບພິຈາລະນາໃນການຮັບຊອງລາຄາ ແລະ ຊອງເຕັກນິກ ຢ່າງເດັດຂາດ.
- ບໍລິສັດ ອີທີແອລ ຈຳກັດ ຈະແຈ້ງຜົນການກວດກາດ້ານສະເປັກເຕັກນິກໃຫ້ຜູ້ເຂົ້າຮ່ວມປະມູນຊາບຊ້າສຸດພາຍໃນ 14 ວັນ ພາຍຫຼັງມື້ຍື່ນຊອງປະມູນ.
- ບໍລິສັດ ອີທີແອລ ຈຳກັດ ຈະເປີດຊອງລາຄາ ພາຍໃນ 03 ວັນ ພາຍຫຼັງໄດ້ຮັບການແຈ້ງຜົນການກວດກາດ້ານສະເປັກເຕັກນິກ.

ໝາຍເຫດ: ສົນໃຈຕິດຕໍ່ສອບຖາມ: 021 260005.

ຜູ້ອຳນວຍການໃຫຍ່ ບໍລິສັດ ອີທີແອລ ຈຳກັດ

ບໍລິສັດ ອີທີແອລ ຈຳກັດ ETL Company Limited

ຮອງ ສູຍຸນ